ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******

ທະນາຄານແຫ່ງ ສ.ປ.ປ.ລາວ

ເລກທີ 559 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 28 ກໍລະກົດ 2008

# ຂໍ້ຕົກລົງ

## ກ່ຽວກັບການກໍານົດອັດຕາແລກປ່ຽນອ້າງອີງລະຫວ່າງ ເງິນກີບກັບໂດລາສະຫະລັດ ແລະ ການກໍານົດອັດຕາແລກປ່ຽນຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;

- ເພື່ອປັບປຸງວິທີການກໍານົດອັດຕາແລກປ່ຽນຂອງລະບົບທະນາຄານເປັນໄປຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃຫ້ມີຄວາມຄ່ອງຕົວດີຂຶ້ນ, ເຮັດໃຫ້ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

ມາດຕາ 1: ໃຫ້ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ສືບຕໍ່ກໍານົດອັດຕາແລກປ່ຽນອ້າງອີງລະຫວ່າງ ເງິນກີບກັບເງິນໂດລາສະຫະລັດ ແລະ ແຈ້ງອັດຕາແລກປ່ຽນອ້າງອີງ ໃຫ້ບັນດາທະນາຄານທຸລະກິດ ພາຍໃນເວລາ 8:15 ໃນແຕ່ລະວັນ ເພື່ອເປັນບ່ອນອີງໃຫ້ ແກ່ທະນາຄານທຸລະກິດ ກໍານົດອັດຕາແລກປ່ຽນຂອງຕົນ.

ມາດຕາ 2: ອະນຸຍາດໃຫ້ທະນາຄານທຸລະກິດ ກໍານົດອັດຕາແລກປ່ຽນຊື້ - ຂາຍລະຫວ່າງເງິນກີບກັບເງິນໂດລາສະຫະລັດຂອງຕົນໄດ້ໃນຂອບເຂດບໍ່ເກີນ ± 0,25% ທຽບໃສ່ອັດຕາແລກປ່ຽນອ້າງອີງ ທີ່ກົມນະໂຍບາຍເງິນຕາ ປະກາດອອກໃນແຕ່ລະວັນ. ສ່ວນຕ່າງລະຫວ່າງ ອັດຕາຊື້ - ອັດຕາຂາຍ ບໍ່ໃຫ້ເກີນ 0,5%.

ທະນາຄານແຫ່ງ ສ.ປ.ປ.ລາວ, ຖະໜົນ ຢອນເນ, ນະຄອນຫລວງວຽງຈັນ ຕູ້ໄປສະນີ 19, SWIFT CODE : LPDR LALA, Website : www.bol.gov.la
ໂທລະພິມ: 4304 BNL.VTE.LS ໂທລະສານ: 856-21-213108 ໂທລະສັບ: 213109-213110 E-mail: Bol@bol.gov.la

ມາດຕາ 3: ໃຫ້ທະນາຄານທຸລະກິດ ເປັນເຈົ້າການໃນການກຳນົດອັດຕາແລກປ່ຽນ ລະຫວ່າງເງິນກີບກັບເງິນຕາຕ່າງປະເທດສະກຸນອື່ນໆ ດ້ວຍຕົນເອງ. ສ່ວນຕ່າງລະຫວ່າງ ອັດຕາຊື້-ອັດຕາຂາຍ ບໍ່ໃຫ້ເກີນ 0,5% ສຳລັບອັດຕາແລກປ່ຽນເງິນກີບກັບເງິນຢູໂຣ ແລະ ເງິນບາດ ສ່ວນສະກຸນເງິນອື່ນໆ ແມ່ນບໍ່ໃຫ້ເກີນ 2%.

ມາດຕາ 4: ກົມນະໂຍບາຍເງິນຕາ ມີໜ້າທີ່ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງໃກ້ຊິດ; ບັນດາທະນາຄານທຸລະກິດ ມີໜ້າທີ່ລາຍງານຈຳນວນການຊື້ - ຂາຍພ້ອມດ້ວຍອັດຕາແລກປ່ຽນ ທັງອັດຕາຊື້ - ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານທຸລະກິດດ້ວຍກັນ ແລະການຊື້-ຂາຍ ຂອງທະນາຄານທຸລະກິດກັບລູກຄ້າໃນແຕ່ລະວັນ ໃຫ້ທະນາຄານແຫ່ງ ສປປ ລາວ (ກົມນະໂຍບາຍເງິນຕາ) ພາຍໃນເວລາ 15:45 ໂມງ ຂອງແຕ່ລະວັນຢ່າງເຂັ້ມງວດ.

ມາດຕາ 5: ກົມບໍລິການ ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດອັດຕາແລກປ່ຽນສະກຸນອື່ນໆໃນແຕ່ລະວັນ ແລະ ແຈ້ງໃຫ້ສາຂາ ທະນາຄານແຫ່ງ ສປປລາວ ຢູ່ຕ່າງແຂວງ, ທະນາຄານທຸລະກິດ ແລະ ບັນດາຮ້ານແລກປ່ຽນ ໃນນະຄອນຫລວງວຽງຈັນ.

ມາດຕາ 6: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 509/ທຫລ, ລົງວັນທີ 2 ສິງຫາ 2007.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ພູເພັດ ຄຳພູນວົງ